**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ.....0306........./ອຄ
ນະຄອນຫຼວງວຽງຈັນ, ວັນທີ..10..ກຸມພາ...2026

# ຂໍ້ຕົກລົງ
# ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 50/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມຊັບສິນທາງປັນຍາ ສະບັບເລກທີ 066/ກຊປ, ລົງວັນທີ 19 ມັງກອນ 2025.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ຂັ້ນຕອນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ເພື່ອຈັດຕັ້ງຜັນຂະຫຍາຍກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໃຫ້ເປັນອັນລະອຽດ ແນໃສ່ເຮັດໃຫ້ການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ, ເປັນເອກະພາບໃນຂອບເຂດທົ່ວປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແມ່ນຂະບວນການແກ້ໄຂຄຳສະເໜີ ກ່ຽວກັບການຄັດຄ້ານ, ປະຕິເສດ, ຍົກເລີກ ຫຼື ລຶບລ້າງ ການຈົດທະບຽນຊັບສິນອຸດສາຫະກຳ ແລະ ພັນພືດໃໝ່, ການຕີຄວາມໝາຍ, ການລຶບລ້າງການແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ສະເໜີ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເຈົ້າຂອງ ຊັບສິນທາງປັນຍາ ຫຼື ໄດ້ຮັບການປົກປ້ອງ ຢູ່ ສປປ ລາວ ທີ່ສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

2. **ຜູ້ຖືກສະເໜີ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກສະເໜີຄັດຄ້ານ, ປະຕິເສດ ຫຼື ລົບລ້າງ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

3. **ຄຳສະເໜີ** ໝາຍເຖິງ ສຳນວນເອກະສານ ລວມທັງຮູບແບບເອເລັກໂຕຣນິກ ທີ່ສະເໜີ ຂໍຄັດຄ້ານ, ແຈ້ງປະຕິເສດ, ຍົກເລີກ ຫຼື ລົບລ້າງ ການຈົດທະບຽນ ແລະ ການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

4. **ໃບມອບສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນ ຊຶ່ງຜູ້ສະເໜີ ຫຼື ຜູ້ຖືກສະເໜີ ໄດ້ມອບສິດຂອງຕົນໃຫ້ ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

5. **ຜູ້ຕາງໜ້າ** ໝາຍເຖິງ ຕົວແທນ, ອົງການຈັດຕັ້ງລິຂະສິດລວມໝູ່ ທີ່ໄດ້ຮັບມອບສິດຈາກຜູ້ສະເໜີ ຫຼື ຜູ້ຖືກສະໜີ ໃນການຍື່ນຄຳສະເໜີ, ຄຳໂຕ້ແຍ້ງ ຫຼື ດຳເນີນການອື່ນ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

6. **ການຄັດຄ້ານ** ໝາຍເຖິງ ການຄັດຄ້ານຄຳສະເໜີ ຂໍຮັບສິດທິບັດ, ອະນຸສິດທິບັດ ຫຼື ຄຳສະເໜີຂໍຈົດທະບຽນແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ແບບຜັງວົງຈອນລວມ, ຖິ່ນກຳເນີດ ແລະ ພັນພືດໃໝ່;

7. **ການປະຕິເສດ** ໝາຍເຖິງ ການປະຕິເສດຄຳສະເໜີ ຂໍຮັບສິດທິບັດ, ອະນຸສິດທິບັດ ຫຼື ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ແບບຜັງວົງຈອນລວມ, ຖິ່ນກຳເນີດ ແລະ ພັນພືດໃໝ່ ທີ່ບໍ່ສອດຄ່ອງກັບເງື່ອນໄຂ ແລະ ຂໍ້ຫ້າມ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ;

8. **ການລົບລ້າງ** ໝາຍເຖິງ ການຍື່ນຄຳສະເໜີຂໍລົບລ້າງທັງໝົດ ຂອງສິດທິບັດ, ອະນຸສິດທິບັດ, ແບບອຸດສາຫະກຳ, ແບບຜັງວົງຈອນລວມ, ເຄື່ອງໝາຍການຄ້າ, ຖິ່ນກຳເນີດ, ພັນພືດໃໝ່, ການແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ທີ່ບໍ່ສອດຄ່ອງກັບເງື່ອນໄຂ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ;

9. **ການຍົກເລີກ** ໝາຍເຖິງ ການຍື່ນຄຳສະເໜີ ຂໍຍົກເລີກບາງສ່ວນຂອງ ສິດທິບັດ, ອະນຸສິດທິບັດ, ແບບອຸດສາຫະກຳ, ແບບຜັງວົງຈອນລວມ, ເຄື່ອງໝາຍການຄ້າ, ຖິ່ນກຳເນີດ ແລະ ພັນພືດໃໝ່ ທີ່ບໍ່ສອດຄ່ອງກັບເງື່ອນໄຂ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍຜູ້ຖືສິດ, ເຈົ້າຂອງສິດ, ບຸກຄົນທີສາມ ຫຼື ການຈັດຕັ້ງ;

10. **ການຕີຄວາມໝາຍ** ໝາຍເຖິງ ການຕີຄວາມໝາຍລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃນຜົນງານໃດໜຶ່ງ ວ່າເປັນ ຫຼື ບໍ່ເປັນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.

**ມາດຕາ 4 ຫຼັກການ ການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ**

ການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນ ຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຄວາມສະໝັກໃຈຂອງຄູ່ກໍລະນີ;
2. ຮັບປະກັນຄວາມຍຸຕິທຳ, ວ່ອງໄວ ແລະ ສອດຄ່ອງກັບກົດໝາຍ;
3. ຄວາມສະເໝີພາບຂອງຄູ່ກໍລະນີ;
4. ການດຳເນີນເປັນພາສາລາວ;
5. ການຮັກສາຄວາມລັບ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຢູ່ ສປປ ລາວ.

## ໝວດທີ 2
## ການຍື່ນ ແລະ ການຮັບ ຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ

**ມາດຕາ 6 ການຍື່ນຄຳສະເໜີ**

ຜູ້ທີ່ມີຈຸດປະສົງສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃຫ້ຍື່ນຄຳສະເໜີຕໍ່ກົມຊັບສິນທາງປັນຍາ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການຍື່ນຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຂໍຮັບສິດທິບັດ, ອະນຸສິດທິບັດ ຫຼື ການຈົດທະບຽນ ແບບຜັງວົງຈອນລວມ, ຖິ່ນກຳເນີດ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃຫ້ຍື່ນຕໍ່ກົມຊັບສິນທາງປັນຍາ;

2. ການຍື່ນຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃຫ້ຍື່ນຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;

ສຳລັບຜູ້ຍື່ນຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ທີ່ເປັນຄົນຕ່າງປະເທດ ແລະ ບໍ່ມີສຳນັກງານດຳເນີນທຸລະກິດ ຢູ່ ສປປ ລາວ ທີ່ໃຊ້ເປັນບ່ອນຕິດຕໍ່ທາງການ ຫຼື ບໍ່ມີທີ່ຢູ່ອາໄສຢູ່ ສປປ ລາວ ຕ້ອງແຕ່ງຕັ້ງຜູ້ຕາງໜ້າຂອງຕົນ ຢູ່ ສປປ ລາວ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການ ເພື່ອດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານແທນ.

**ມາດຕາ 7 ສຳນວນຄຳສະເໜີ**

ຄຳສະເໜີ ກ່ຽວກັບ ການຄັດຄ້ານ, ປະຕິເສດ, ຍົກເລີກ ຫຼື ລົບລ້າງ ຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່; ຍົກເລີກ ຫຼື ລົບລ້າງ ການແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕ້ອງເປັນພາສາລາວ ແລະ ປະກອບມີເອກະສານ ດັ່ງນີ້:

**1. ການຄັດຄ້ານ**

1) ຄຳສະເໜີ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2) ໃບມອບສິດ ກໍລະນີ ຍື່ນຜ່ານຜູ້ຕາງໜ້າ;
3) ຂໍ້ມູນ, ຫຼັກຖານ ຫຼື ຄຳໂຕ້ແຍ້ງ;
4) ໃບຢັ້ງຢືນການຈົດທະບຽນຊັບສິນອຸດສາຫະກຳ ຫຼື ພັນພືດໃໝ່ ຢູ່ປະເທດຕົ້ນກຳເນີດ ຫຼື ຫຼັກຖານການເປັນເຈົ້າຂອງຊັບສິນອຸດສາຫະກຳ ຫຼື ພັນພືດໃໝ່.
5) ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

**ກໍລະນີ ຂໍພິຈາລະນາຂັ້ນສຸດທ້າຍ ຕ້ອງປະກອບເອກະສານ ດັ່ງນີ້:**

1) ຄຳສະເໜີ ຕາມແບບພິມຂອງກົມຊັບສິນທາງປັນຍາ
2) ໜັງສືແຈ້ງຜົນການຄັດຄ້ານ ຂໍຮັບໃບຢັ້ງຢືນຊັບສິນອຸດສາຫະກຳ ຫຼື ພັນພືດໃໝ່;
3) ຂໍ້ມູນ, ຫຼັກຖານ ຫຼື ຄຳໂຕ້ແຍ້ງໃໝ່;
4) ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

**2. ການປະຕິເສດ**

1) ໜັງສືຊີ້ແຈງ ການແຈ້ງປະຕິເສດເບື້ອງຕົ້ນ ຫຼື ຂັ້ນສຸດທ້າຍ ກ່ຽວກັບການຂໍຮັບສິດທິບັດ, ອະນຸສິດທິບັດ ແລະ ການຈົດທະບຽນຊັບສິນອຸດສາຫະກຳ ຫຼື ພັນພືດໃໝ່;
2) ສຳເນົາໃບຢັ້ງຢືນການຈົດທະບຽນ ຊັບສິນອຸດສາຫະກຳ ຫຼື ພັນພືດໃໝ່ ຢູ່ພາຍໃນ ຫຼື ຕ່າງປະເທດ ຫຼື ສຳເນົາຫຼັກຖານການເປັນເຈົ້າຂອງຊັບສິນອຸດສາຫະກຳ ຫຼື ພັນພືດໃໝ່;
3) ໃບມອບສິດ ກໍລະນີ ຍື່ນຜ່ານຜູ້ຕາງໜ້າ;
4) ຂໍ້ມູນ, ຫຼັກຖານ ຫຼື ຄຳຊີ້ແຈງ;
5) ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ ກໍລະນີການດັດແກ້ສິດທິບັດ ແລະ ອະນຸສິດທິບັດ.

**ກໍລະນີ ຂໍພິຈາລະນາຂັ້ນສຸດທ້າຍ ຕ້ອງປະກອບເອກະສານ ດັ່ງນີ້:**

1) ຄຳສະເໜີ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2) ສຳເນົາໜັງສືແຈ້ງຜົນການປະຕິເສດຂັ້ນສຸດທ້າຍຂອງການຂໍຮັບໃບຢັ້ງຢືນ ຊັບສິນອຸດສາຫະກຳ ຫຼື ພັນພືດໃໝ່;
3) ຂໍ້ມູນ, ຫຼັກຖານ ຫຼື ຄຳໂຕ້ແຍ້ງໃໝ່;
4) ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

**3. ການຂໍຍົກເລີກ ຫຼື ລຶບລ້າງ**

1) ຄຳສະເໜີ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2) ໃບມອບສິດ ໃນກໍລະນີທີ່ຍື່ນຜ່ານຜູ້ຕາງໜ້າ;
3) ສຳເນົາສິດທິບັດ, ອະນຸສິດທິບັດ ແລະ ໃບຢັ້ງຢືນການຈົດທະບຽນຊັບສິນອຸດສາຫະກຳຢູ່ ພາຍໃນ ຫຼື ຕ່າງປະເທດ ຫຼື ສຳເນົາຫຼັກຖານການເປັນເຈົ້າຂອງຊັບສິນອຸດສາຫະກຳ ຫຼື ພັນພືດໃໝ່ ຫຼື ການແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;
4) ຂໍ້ມູນ, ຫຼັກຖານ ຫຼື ຄຳຊີ້ແຈງ;
5) ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

**ກໍລະນີ ຂໍພິຈາລະນາຂັ້ນສຸດທ້າຍ ຕ້ອງປະກອບເອກະສານ ດັ່ງລຸ່ມນີ້:**

1) ຄຳສະເໜີ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2) ສຳເນົາໜັງສືແຈ້ງຜົນການຍົກເລີກ ຫຼື ລຶບລ້າງ ຂອງການຂໍຮັບໃບຢັ້ງຢືນ ຊັບສິນອຸດສາຫະກຳ ຫຼື ພັນພືດໃໝ່;
3) ຂໍ້ມູນ, ຫຼັກຖານ ຫຼື ຄຳໂຕ້ແຍ້ງໃໝ່;
4) ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

**4. ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

1) ຄຳສະເໜີ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2) ໃບມອບສິດ ກໍລະນີທີ່ຍື່ນຜ່ານຜູ້ຕາງໜ້າ;
3) ຂໍ້ມູນ, ຫຼັກຖານ ຫຼື ຄຳຊີ້ແຈງ;
4) ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ກໍລະນີ ສຳນວນຄຳສະເໜີ ເປັນພາສາອັງກິດ ຜູ້ຍື່ນຕ້ອງສະໜອງເອກະສານ ສະບັບແປພາສາລາວ ພາຍໃນ ສາມສິບວັນ ນັບແຕ່ວັນທີ່ຍື່ນຄຳສະເໜີ ນຳກົມຊັບສິນທາງປັນຍາ ຖ້າກາຍກຳນົດເວລາດັ່ງກ່າວ ກົມຊັບສິນທາງປັນຍາ ຈະບໍ່ພິຈາລະນາຄຳສະເໜີ ແລະ ຖືວ່າສະຫຼະສິດ.

**ມາດຕາ 8 ການຮັບຄໍາສະເໜີ**

ການຮັບຄໍາສະເໜີ ໃຫ້ປະຕິບັດ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຖ້າຫາກຍື່ນຄໍາສະເໜີ ຢູ່ກົມຊັບສິນທາງປັນຍາ ຕ້ອງຮັບເອົາຄໍາສະເໜີ ທີ່ມີສໍານວນເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ກໍານົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;

2. ກໍລະນີ ຍື່ນຄໍາສະເໜີ ຜ່ານພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານລະບົບເອເລັກໂຕຣນິກ ຕ້ອງຮັບຄໍາສະເໜີ ທີ່ມີສໍານວນເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ກໍານົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ແລະ ນໍາສົ່ງສໍານວນເອກະສານດັ່ງກ່າວ ໃຫ້ກົມຊັບສິນທາງປັນຍາ ພາຍໃນ ສາມວັນລັດຖະການ ນັບແຕ່ວັນທີຮັບຄໍາສະເໜີ ເພື່ອດໍາເນີນການພິຈາລະນາແກ້ໄຂ.

## ໝວດທີ 3
## ການພິຈາລະນາ ຄໍາສະເໜີຂໍຄັດຄ້ານ, ປະຕິເສດ, ຍົກເລີກ ຫຼື ການລຶບລ້າງ

**ມາດຕາ 9 ການພິຈາລະນາ ຄໍາສະເໜີຂໍຄັດຄ້ານຊັບສິນອຸດສາຫະກໍາ ຫຼື ພັນພືດໃໝ່**

ການພິຈາລະນາຄໍາສະເໜີຂໍຄັດຄ້ານຊັບສິນອຸດສາຫະກໍາ ຫຼື ພັນພືດໃໝ່ ໃຫ້ປະຕິບັດ ດັ່ງນີ້:

1. ພາຍຫຼັງໄດ້ຮັບຄໍາສະເໜີ ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຖືກຄັດຄ້ານການຂໍຈົດທະບຽນຊາບພາຍໃນ ເຈັດວັນ ລັດຖະການ ນັບແຕ່ວັນທີຮັບຄໍາສະເໜີ ເພື່ອສະໜອງຄໍາຊີ້ແຈງ ແລະ ຂໍ້ມູນຫຼັກຖານ ພາຍໃນ ຫົກສິບວັນ ນັບແຕ່ວັນອອກແຈ້ງການ, ຖ້າບໍ່ປະຕິບັດຕາມການກໍານົດເວລາ ກົມຊັບສິນທາງປັນຍາ ຈະພິຈາລະນາຕາມຂໍ້ມູນຫຼັກຖານທີ່ໄດ້ຮັບ;

2. ຖ້າຫາກຂໍ້ມູນຫຼັກຖານ ບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນ ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການ ຫຼື ໜັງສືເຊີນ ເຖິງຜູ້ຂໍຄັດຄ້ານ ແລະ/ຫຼື ຜູ້ຖືກຄັດຄ້ານ ເພື່ອສະໜອງຂໍ້ມູນເພີ່ມເຕີມ ໃຫ້ກົມຊັບສິນທາງປັນຍາ ພາຍໃນ ຫົກສິບວັນ ນັບແຕ່ວັນອອກແຈ້ງການ, ຖ້າບໍ່ປະຕິບັດຕາມແຈ້ງການ ກົມຊັບສິນທາງປັນຍາ ຈະພິຈາລະນາຕາມຫຼັກຖານທີ່ມີ;

3. ພາຍໃນ ສາມສິບວັນ ກົມຊັບສິນທາງປັນຍາ ຕ້ອງຄົ້ນຄວ້າ ແລະ ພິຈາລະນາ ການຄັດຄ້ານວ່າເປັນຜົນ ຫຼື ບໍ່ເປັນຜົນ ແລະ ຕ້ອງແຈ້ງຜົນການຄັດຄ້ານຄໍາຮ້ອງຂໍຈົດທະບຽນ ໃຫ້ຄູ່ກໍລະນີຊາບ;

4. ຖ້າຄູ່ກໍລະນີ ບໍ່ພໍໃຈຕໍ່ຜົນການພິຈາລະນາດັ່ງກ່າວ, ສາມາດສະເໜີຄໍາຮ້ອງຂໍພິຈາລະນາຄືນ ຕໍ່ກົມຊັບສິນທາງປັນຍາ ພາຍໃນ ສາມສິບວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ. ຖ້າກາຍເວລາທີ່ກໍານົດໄວ້ ຖືວ່າຍິນຍອມຕໍ່ຜົນການພິຈາລະນາ ແລະ ໃຫ້ປະຕິບັດຕາມຂັ້ນຕອນທີ່ກໍານົດໄວ້ໃນໝວດ 4 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 10 ການພິຈາລະນາ ການປະຕິເສດຊັບສິນອຸດສາຫະກໍາ ຫຼື ພັນພືດໃໝ່**

ການພິຈາລະນາ ການປະຕິເສດຊັບສິນອຸດສາຫະກໍາ ຫຼື ພັນພືດໃໝ່ ໃຫ້ປະຕິບັດ ດັ່ງນີ້:

1. ພາຍຫຼັງກົມຊັບສິນທາງປັນຍາ ຄົ້ນຄວ້າພິຈາລະນາແລ້ວ ເຫັນວ່າບໍ່ສອດຄ່ອງຕາມເງື່ອນໄຂທີ່ກໍານົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຕ້ອງແຈ້ງປະຕິເສດຄໍາຮ້ອງຂໍຈົດທະບຽນ ໃຫ້ຜູ້ຂໍຈົດທະບຽນຊາບ ພາຍໃນ ເຈັດວັນ ລັດຖະການ ນັບແຕ່ວັນທີຄົ້ນຄວ້າພິຈາລະນາແລ້ວ;

2. ຜູ້ຂໍຈົດທະບຽນສາມາດຍື່ນຄໍາຊີ້ແຈງ ແລະ ຂໍ້ມູນຫຼັກຖານຂອງຕົນ ຕໍ່ກົມຊັບສິນທາງປັນຍາ ພາຍໃນຫົກສິບວັນ ນັບແຕ່ວັນທີອອກແຈ້ງການ, ຖ້າບໍ່ປະຕິບັດຕາມການກໍານົດເວລາ ກົມຊັບສິນທາງປັນຍາ ຈະພິຈາລະນາຕາມຂໍ້ມູນຫຼັກຖານທີ່ໄດ້ຮັບ;

3. ພາຍໃນ ສາມສິບວັນ ກົມຊັບສິນທາງປັນຍາ ຕ້ອງຄົ້ນຄວ້າ ແລະ ພິຈາລະນາ ຖ້າຫາກເຫັນວ່າການແຈ້ງປະຕິເສດ ເປັນຜົນ ຫຼື ບໍ່ເປັນຜົນ ຕ້ອງແຈ້ງຜົນການພິຈາລະນາການແຈ້ງປະຕິເສດຄໍາຮ້ອງຂໍຈົດທະບຽນໃຫ້ຜູ້ຂໍຈົດທະບຽນຊາບ;

4. ກໍລະນີ ຂໍ້ມູນຫຼັກຖານ ບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນ ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການເຖິງຜູ້ຂໍຈົດທະບຽນຊາບ ເພື່ອສະໜອງຂໍ້ມູນເພີ່ມເຕີມ ໃຫ້ກົມຊັບສິນທາງປັນຍາ ພາຍໃນ ສາມສິບວັນ ນັບແຕ່ວັນທີອອກແຈ້ງການ, ຖ້າບໍ່ປະຕິບັດຕາມແຈ້ງການ ກົມຊັບສິນທາງປັນຍາ ຈະພິຈາລະນາຕາມຫຼັກຖານທີ່ໄດ້ຮັບ;

5. ຖ້າຫາກບໍ່ພໍໃຈຕໍ່ຜົນການພິຈາລະນາ, ຜູ້ຂໍຈົດທະບຽນສາມາດສະເໜີຄໍາຮ້ອງຂໍພິຈາລະນາຄືນຕໍ່ກົມຊັບສິນທາງປັນຍາ ພາຍໃນເວລາ ສາມສິບວັນ ນັບແຕ່ວັນທີກົມຊັບສິນທາງປັນຍາ ພິຈາລະນາຕາມຫຼັກຖານ, ຖ້າກາຍກໍານົດໃຫ້ຖືວ່າ ຍິນຍອມຕໍ່ຜົນການພິຈາລະນາ.

**ມາດຕາ 11 ການພິຈາລະນາຄໍາສະເໜີຂໍຍົກເລີກ ຫຼື ລຶບລ້າງ ໂດຍເຈົ້າຂອງຊັບສິນທາງປັນຍາ**

ການພິຈາລະນາ ການຂໍຍົກເລີກ ຫຼື ລຶບລ້າງໂດຍເຈົ້າຂອງ ຕ້ອງດໍາເນີນການ ດັ່ງນີ້:

1. ພາຍຫຼັງກົມຊັບສິນທາງປັນຍາ ໄດ້ຮັບຄໍາສະເໜີຂໍຍົກເລີກ ຫຼື ລຶບລ້າງ ການຈົດທະບຽນຊັບສິນອຸດສາຫະກໍາ, ພັນພືດໃໝ່ ຫຼື ການແຈ້ງຂໍ້ມູນລິຂະສິດ ໂດຍເຈົ້າຂອງ, ກົມຊັບສິນທາງປັນຍາ ຕ້ອງຄົ້ນຄວ້າ ແລະ ພິຈາລະນາຂໍ້ມູນຫຼັກຖານ ແລະ ຕ້ອງແຈ້ງຜົນການຂໍຍົກເລີກ ຫຼື ລຶບລ້າງ ໃຫ້ຜູ້ຮ້ອງຂໍຊາບ ພາຍໃນ ຫົກສິບວັນ ນັບແຕ່ວັນທີໄດ້ຮັບຄໍາສະເໜີ;

2. ກໍລະນີ ຂໍ້ມູນຫຼັກຖານ ບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນ, ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການ ຫຼື ໜັງສືເຊີນ ເຖິງຜູ້ຂໍຍົກເລີກ ຫຼື ລຶບລ້າງ ໂດຍເຈົ້າຂອງ ເພື່ອສະໜອງຂໍ້ມູນເພີ່ມເຕີມ ໃຫ້ກົມຊັບສິນທາງປັນຍາ ພາຍໃນສາມສິບວັນ ນັບແຕ່ວັນທີອອກແຈ້ງການ, ຖ້າບໍ່ປະຕິບັດຕາມແຈ້ງການ ຈະພິຈາລະນາຕາມຫຼັກຖານທີ່ມີ.

## ໝວດທີ 4
## ຂັ້ນຕອນການພິຈາລະນາຄໍາສະເໜີຂັ້ນສຸດທ້າຍ

**ມາດຕາ 12 ການພິຈາລະນາຄໍາສະເໜີ**

ການພິຈາລະນາຄໍາສະເໜີ ຕ້ອງດໍາເນີນການຕາມຂັ້ນຕອນ ດັ່ງນີ້:

1. ພາຍຫຼັງໄດ້ຮັບຄໍາສະເໜີຄົບຖ້ວນ ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຖືກຄັດຄ້ານ ຫຼື ປະຕິເສດ, ຍົກເລີກ ຫຼື ລຶບລ້າງ ຮັບຊາບ ພາຍໃນ ເຈັດວັນລັດຖະການ ເພື່ອສະໜອງຄໍາຊີ້ແຈງ ແລະ ຂໍ້ມູນຫຼັກຖານຕໍ່ກົມຊັບສິນທາງປັນຍາ ພາຍໃນ ສາມສິບວັນ ນັບແຕ່ວັນທີອອກແຈ້ງການ, ຖ້າບໍ່ປະຕິບັດຕາມກໍານົດເວລາ ກົມຊັບສິນທາງປັນຍາ ຈະພິຈາລະນາຕາມຫຼັກຖານທີ່ໄດ້ຮັບ;

2. ກໍລະນີ ຂໍ້ມູນຫຼັກຖານ ບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນ ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການ ເຖິງຄູ່ກໍລະນີຊາບ ເພື່ອສະໜອງຂໍ້ມູນເພີ່ມເຕີມ ໃຫ້ກົມຊັບສິນທາງປັນຍາ ພາຍໃນ ສິບຫ້າວັນ ນັບແຕ່ວັນທີອອກແຈ້ງການ, ຖ້າບໍ່ປະຕິບັດຕາມແຈ້ງການ ກົມຊັບສິນທາງປັນຍາ ຈະພິຈາລະນາຕາມຫຼັກຖານທີ່ມີ;

3. ກົມຊັບສິນທາງປັນຍາ ຕ້ອງຄົ້ນຄວ້າ ແລະ ພິຈາລະນາພາຍຫຼັງເຫັນວ່າຄໍາສະເໜີ ເປັນຜົນ ຫຼື ບໍ່ເປັນຜົນ ຕ້ອງອອກແຈ້ງຜົນ ໃຫ້ຄູ່ກໍລະນີຊາບ ພາຍໃນ ສິບວັນລັດຖະການ;

4. ຖ້າຫາກຄູ່ກໍລະນີ ບໍ່ພໍໃຈຕໍ່ຜົນການພິຈາລະນາ, ສາມາດປະກອບສໍານວນຄໍາສະເໜີພ້ອມດ້ວຍ ຄໍາຊີ້ແຈງ ແລະ ຂໍ້ມູນຫຼັກຖານໃໝ່ ໃຫ້ກົມຊັບສິນທາງປັນຍາ ພິຈາລະນາຄືນໃໝ່ ພາຍໃນ ສາມສິບວັນ ນັບແຕ່ວັນອອກແຈ້ງຜົນ, ຖ້າກາຍກໍານົດເວລາດັ່ງກ່າວ ໃຫ້ຖືວ່າຍອມຮັບຕໍ່ຜົນການພິຈາລະນາ.

**ມາດຕາ 13 ການພິຈາລະນາຂໍ້ຂັດແຍ່ງ ກ່ຽວກັບແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ການພິຈາລະນາຂໍ້ຂັດແຍ່ງ ກ່ຽວກັບແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕ້ອງດໍາເນີນການຕາມຂັ້ນຕອນ ດັ່ງນີ້:

1. ດໍາເນີນການຄົ້ນຄວ້າ ແລະ ພິຈາລະນາຄໍາສະເໜີ ກ່ຽວກັບການຕີຄວາມໝາຍໃນການໄດ້ຮັບການປົກປ້ອງຕາມທີ່ກໍານົດໄວ້ໃນມາດຕາ 5, 91 ແລະ 95 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ລະບຽບການທີ່ກ່ຽວຂ້ອງ ແລະ ແຈ້ງຜົນການພິຈາລະນາໃຫ້ຜູ້ສະເໜີຊາບ ພາຍໃນ ສິບວັນ ລັດຖະການ ນັບແຕ່ວັນທີພິຈາລະນາແລ້ວ;

2. ກໍລະນີ ມີຂໍ້ຂັດແຍ່ງເກີດຂຶ້ນ ສາມາດຍື່ນຄໍາສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ນໍາກົມຊັບສິນທາງປັນຍາ, ພາຍຫຼັງກົມພິຈາລະນາແລ້ວຕ້ອງແຈ້ງຜົນ ພາຍໃນ ສິບວັນ ລັດຖະການ;

3. ກໍລະນີ ມີຂໍ້ຂັດແຍ່ງເກີດຂຶ້ນ ກ່ຽວກັບການເປັນເຈົ້າຂອງຜົນງານແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ສາມາດດໍາເນີນການຮ້ອງຟ້ອງຢູ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຂໍ້ຂັດແຍ່ງດັ່ງກ່າວ.

**ມາດຕາ 14 ການພິຈາລະນາແກ້ໄຂຂໍ້ຂັດແຍ່ງ ໂດຍຄະນະກຳມະການ**

ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ໄດ້ຮັບສຳນວນຄຳສະເໜີຂໍພິຈາລະນາຄືນ ແລະ ຂໍ້ມູນຫຼັກຖານໃໝ່ແລ້ວ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຕ້ອງແຕ່ງຕັ້ງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານໃໝ່ ເພື່ອຄົ້ນຄວ້າ ແລະ ພິຈາລະນາຄືນ;

2. ຕ້ອງເປີດກອງປະຊຸມ ເພື່ອພິຈາລະນາແກ້ໄຂຄຳສະເໜີ ພາຍໃນ ສິບຫ້າວັນ ນັບແຕ່ວັນທີໄດ້ຮັບການແຕ່ງຕັ້ງ;

3. ກໍລະນີ ຈຳເປັນສາມາດເຊີນຄູ່ກໍລະນີ ມາຊີ້ແຈງ ຫຼື ສະໜອງຂໍ້ມູນເພີ່ມເຕີມ ພາຍໃນ ຫ້າວັນລັດຖະການ;

4. ພາຍຫຼັງສຳເລັດກອງປະຊຸມ ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ຕ້ອງສ້າງປຶ້ມບັນທຶກຜົນການແກ້ໄຂຄຳສະເໜີ ໃຫ້ສຳເລັດໂດຍທັນທີ ຫຼື ຊ້າສຸດບໍ່ໃຫ້ເກີນ ສາມວັນ ລັດຖະການ ນັບແຕ່ວັນທີສຳເລັດກອງປະຊຸມ.

**ມາດຕາ 15 ເນື້ອໃນຂອງປຶ້ມບັນທຶກຜົນການແກ້ໄຂຄຳສະເໜີ**

ປຶ້ມບັນທຶກຜົນການແກ້ໄຂຄຳສະເໜີ ຕ້ອງມີເນື້ອໃນ ດັ່ງນີ້:

1. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ ແລະ ບ່ອນຢູ່ປະຈຸບັນ ຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
2. ຊື່ ແລະ ນາມສະກຸນ ຄະນະກຳມະການແກ້ໄຂທາງດ້ານບໍລິຫານ ແລະ ຜູ້ບັນທຶກ ແລະ ສະຖານທີ່;
3. ວັນທີ ແລະ ເລກທີ ຂອງສຳນວນຄຳສະເໜີ;
4. ຄຳສະເໜີ ທີ່ນຳມາແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ;
5. ກຳນົດເວລາປະຕິບັດປຶ້ມບັນທຶກຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ;
6. ຜົນຂອງການແກ້ໄຂທາງດ້ານບໍລິຫານ;
7. ເວລາ, ວັນ, ເດືອນ, ປີຂອງການສິ້ນສຸດການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ;
8. ລາຍເຊັນຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ, ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ, ຜູ້ບັນທຶກ ແລະ ຢັ້ງຢືນ ໂດຍກົມຊັບສິນທາງປັນຍາ.

**ມາດຕາ 16 ການແຈ້ງຜົນການແກ້ໄຂຄຳສະເໜີ**

ກົມຊັບສິນທາງປັນຍາ ຕ້ອງແຈ້ງຜົນການແກ້ໄຂຄຳສະເໜີຂັ້ນສຸດທ້າຍໃຫ້ຄູ່ກໍລະນີ ແລະ ພາກສ່ວນກ່ຽວຂ້ອງຊາບ ເປັນລາຍລັກອັກສອນ ພາຍໃນ ຫ້າວັນ ລັດຖະການ ນັບແຕ່ວັນທີສຳເລັດການສ້າງປຶ້ມບັນທຶກເປັນຕົ້ນໄປ.

ຖ້າຫາກຄູ່ກໍລະນີ ບໍ່ພໍໃຈຕໍ່ຜົນການພິຈາລະນາຂອງກົມຊັບສິນທາງປັນຍາ ສາມາດຍື່ນຄຳສະເໜີຂໍດຳເນີນຕາມຂະບວນການຍຸຕິທຳ ໃນຂັ້ນຖັດໄປຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ແລະ ຜູ້ຊ່ຽວຊານ

**ມາດຕາ 17 ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ**

ກົມຊັບສິນທາງປັນຍາ ຕ້ອງແຕ່ງຕັ້ງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ຈຳນວນ ສາມ ຫຼື ຫ້າ ທ່ານ ປະກອບດ້ວຍ ປະທານ, ຮອງປະທານ ແລະ ຄະນະ.

ບຸກຄົນ ທີ່ຖືກແຕ່ງຕັ້ງເຂົ້າເປັນຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ຕ້ອງມີມາດຖານ ແລະ ເງື່ອນໄຂຄົບຖ້ວນ ຕາມທີ່ກຳນົດໄວ້ໃນມາດຕາ 18 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 18 ມາດຖານ ແລະ ເງື່ອນໄຂ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ**

ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ຕ້ອງມີມາດຖານ ແລະ ເງື່ອນໄຂ ດັ່ງນີ້:

1. ມີຄຸນສົມບັດສິນທຳປະຕິວັດ, ຄວາມຍຸຕິທຳ, ບໍລິສຸດສັດຊື່, ມີຈັນຍາບັນ ແລະ ຈັນຍາທຳ ຂອງວິຊາຊີບ;
2. ມີຄວາມຮູ້, ຄວາມສາມາດ ແລະ ຊ່ຽວຊານ ດ້ານຊັບສິນທາງປັນຍາ ສະເພາະດ້ານໃດໜຶ່ງທີ່ແນ່ນອນ;
3. ມີຄວາມຮູ້ທາງດ້ານກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
4. ມີປະສົບການເຮັດວຽກໃນຂົງເຂດຊັບສິນທາງປັນຍາ ຢ່າງໜ້ອຍ ຫ້າ ປີ ຂຶ້ນໄປ;
5. ບໍ່ເຄີຍຖືກປະຕິບັດວິໄນ;
6. ມີສຸຂະພາບແຂງແຮງດີ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ**

ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດກອງປະຊຸມ ເພື່ອພິຈາລະນາ ຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ເພື່ອແກ້ໄຂບັນຫາຂອງຄູ່ກໍລະນີ ຢ່າງມີຄວາມຍຸຕິທຳ, ວ່ອງໄວ ແລະ ໂປ່ງໃສ;
2. ລົງເກັບກຳຂໍ້ມູນ, ຫຼັກຖານກັບທີ່ ກໍລະນີຈຳເປັນ;
3. ສ້າງປຶ້ມບັນທຶກຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ;
4. ບໍ່ເປີດເຜີຍຂໍ້ມູນ, ຫຼັກຖານ ແລະ ເອກະສານ ຕໍ່ບຸກຄົນພາຍນອກ ຍົກເວັ້ນຂໍ້ມູນທີ່ຕ້ອງສະໜອງໃຫ້ຂະແໜງການທີ່ກ່ຽວຂ້ອງຕາມກົດໝາຍ;
5. ແຕ່ງຕັ້ງຊ່ຽວຊານສະເພາະດ້ານ ເພື່ອໃຫ້ຄຳປຶກສາ, ແນະນຳ, ຊ່ວຍເຫຼືອດ້ານວິຊາການ ໃນຂັ້ນຕອນການພິຈາລະນາແກ້ໄຂຂໍ້ຂັດແຍ່ງ;
6. ສະຫຼຸບ ແລະ ລາຍງານຜົນການຕົກລົງຂອງກອງປະຊຸມເປັນລາຍລັກອັກສອນ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 20 ຜູ້ຊ່ຽວຊານ**

ຜູ້ຊ່ຽວຊານ ແມ່ນບຸກຄົນທີ່ມີຄວາມຮູ້, ຄວາມຊຳນານ ແລະ ປະສົບການໃນວິຊາສະເພາະໃດໜຶ່ງໃນຂົງເຂດຊັບສິນທາງປັນຍາ ທີ່ຖືກຮັບຮູ້ ແລະ ຢັ້ງຢືນຈາກສະຖາບັນ ຫຼື ອົງການຈັດຕັ້ງກ່ຽວຂ້ອງ.

ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ສາມາດແຕ່ງຕັ້ງຜູ້ຊ່ຽວຊານ ເພື່ອໃຫ້ຄຳປຶກສາ, ຄຳແນະນຳ ແລະ ການຊ່ວຍເຫຼືອດ້ານວິຊາການ ໃນຂັ້ນຕອນກວດສອບ ແລະ ການພິຈາລະນາແກ້ໄຂຄຳສະເໜີທີ່ມີລັກສະນະເຕັກນິກວິຊາການສູງ ແລະ ສະຫຼັບຊັບຊ້ອນ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງຜູ້ຊ່ຽວຊານ**

ຜູ້ຊ່ຽວຊານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ທວງເອົາຂໍ້ມູນ, ຫຼັກຖານເພີ່ມເຕີມ ເພື່ອໃຫ້ການພິສູດມີຄວາມຖືກຕ້ອງ ແລະ ຊັດເຈນ;
2. ໃຫ້ການຊີ້ແຈງ ກ່ຽວກັບຜົນການພິສູດ ຫຼື ໄດ້ຮັບການປົກປ້ອງຕາມກົດໝາຍ;
3. ເພີ່ມເຕີມ, ດັດແປງຜົນການພິສູດຂໍ້ມູນ, ຫຼັກຖານ ຖ້າເຫັນວ່າມີຂໍ້ມູນໃໝ່ ກ່ຽວກັບການພິສູດ;
4. ພິສູດຂໍ້ມູນ, ຫຼັກຖານ ແລະ ໃຫ້ຄຳເຫັນຢ່າງຖືກຕ້ອງຕາມຫຼັກວິຊາສະເພາະ;
5. ສະຫຼຸບ ແລະ ລາຍງານຜົນຂອງການພິສູດຂໍ້ມູນ ແລະ ຫຼັກຖານ ໃຫ້ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ;
6. ຮັບຜິດຊອບຕໍ່ຜົນຂອງການພິສູດຫຼັກຖານ ແລະ ບໍ່ເປີດເຜີຍຜົນຂອງການພິສູດຂອງຕົນ ຕໍ່ສາທາລະນະຊົນ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 22 ຂໍ້ຫ້າມສໍາລັບ ຄູ່ກໍລະນີ**

ຫ້າມຄູ່ກໍລະນີ ມີພຶດຕິກໍາ ດັ່ງນີ້:

1. ປອມແປງເອກະສານ, ຂໍ້ມູນ, ຫຼັກຖານ, ຄໍາຊີ້ແຈງ ຫຼື ຄໍາໂຕ້ແຍ້ງ ທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ;
2. ບັງຄັບ, ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ, ຕົວະຍົວະ, ຫຼອກລວງ ຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ແລະ ຜູ້ຊ່ຽວຊານ ຫຼື ຜູ້ຊໍານານງານ;
3. ໃຫ້ສິນບົນ ຫຼື ຜົນປະໂຫຍດອື່ນ ແກ່ຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ແລະ ຜູ້ຊ່ຽວຊານ ຫຼື ຜູ້ຊໍານານງານ;
4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 23 ຂໍ້ຫ້າມສໍາລັບ ພະນັກງານ, ຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ແລະ ຜູ້ຊ່ຽວຊານ**

ຫ້າມພະນັກງານ, ຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ແລະ ຜູ້ຊ່ຽວຊານ ມີພຶດຕິກໍາ ດັ່ງນີ້:

1. ຂາດຄວາມຮັບຜິດຊອບ ແລະ ປະລະໜ້າທີ່ ຕາມການມອບໝາຍໃນຂໍ້ຕົກລົງແຕ່ງຕັ້ງຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ;
2. ປະຕິບັດໜ້າທີ່ໃນການແກ້ໄຂຄໍາສະເໜີ ໂດຍບໍ່ມີຄວາມຍຸຕິທໍາ, ລໍາອຽງ ຕໍ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ເປີດເຜີຍເອກະສານ, ຂໍ້ມູນ, ຫຼັກຖານ, ຄໍາຊີ້ແຈງ ຫຼື ຄໍາໂຕ້ແຍ້ງ ທີ່ກ່ຽວຂ້ອງກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງ;
4. ນໍາໃຊ້ຂໍ້ມູນທີ່ຕົນໄດ້ຮູ້ ເພື່ອຫາຜົນປະໂຫຍດແກ່ຕົນເອງ ຫຼື ເພື່ອທໍາລາຍສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
5. ເຂົ້າຮ່ວມໃນການແກ້ໄຂທາງດ້ານບໍລິຫານ ທີ່ພົວພັນເຖິງຜົນປະໂຫຍດຂອງຕົນເອງ, ຜົວ ຫຼື ເມຍ ຫຼື ຍາດໃກ້ຊິດຂອງຕົນ;
6. ຮັບ, ທວງເອົາເງິນ ຫຼື ຜົນປະໂຫຍດອື່ນທີ່ບໍ່ຖືກຕ້ອງ ຈາກຄູ່ກໍລະນີ;
7. ກົດໜ່ວງ, ຖ່ວງດຶງ, ບັງຄັບ, ນາບຂູ່, ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ;
8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ

**ມາດຕາ 24 ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ**

ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຂອງຂະແໜງອຸດສາຫະກໍາ ແລະ ການຄ້າ ແບ່ງອອກເປັນ ສອງ ຂັ້ນ ຄື:

1. ຂັ້ນສູນກາງ ແມ່ນ ກົມຊັບສິນທາງປັນຍາ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ.

**ມາດຕາ 25 ສິດ ແລະ ໜ້າທີ່ຂອງ ກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່ ແລະ ແນະນຳນິຕິກຳ ກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃຫ້ສັງຄົມຮັບຊາບ;

3. ຮັບ ແລະ ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

4. ພິຈາລະນາຄົ້ນຄວ້າແກ້ໄຂຄຳສະເໜີທາງດ້ານບໍລິຫານ ກ່ຽວກັບຈົດທະບຽນຊັບສິນອຸດສາຫະກຳ ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຄື: ຄຳສະເໜີ ການຄັດຄ້ານ, ປະຕິເສດ, ຍົກເລີກ ຫຼື ລຶບລ້າງ ການຈົດທະບຽນຊັບສິນອຸດສາຫະກຳ ແລະ ພັນພືດໃໝ່, ການຕີຄວາມໝາຍ, ການລຶບລ້າງການແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

5. ແຕ່ງຕັ້ງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

6. ບັນທຶກ ແລະ ເກັບຮັກສາຂໍ້ມູນຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

7. ຍົກເລີກ ຫຼື ລຶບລ້າງ ໃບຢັ້ງຢືນການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່ ແລະ ການແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

8. ຊຸກຍູ້ ແລະ ສົ່ງເສີມ ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ໃຫ້ຂັ້ນເທິງຊາບເປັນແຕ່ລະໄລຍະ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ແນະນຳນິຕິກຳ ກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃຫ້ສັງຄົມຮັບຊາບ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

2. ຮັບ ແລະ ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

3. ນຳສົ່ງສຳນວນຄຳສະເໜີ, ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ກົມຊັບສິນທາງປັນຍາ ເພື່ອດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ;

4. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ໃຫ້ກົມຊັບສິນທາງປັນຍາ ໃນແຕ່ລະໄລຍະ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ໝວດທີ 8
# ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 28 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ແລະ ພັນພືດໃໝ່ ສະບັບເລກທີ 0441/ອຄ, ລົງວັນທີ 30 ມີນາ 2023.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ